# ຂ່າວປອມ (Fake News)
# ຂໍ້ມູນທີ່ບໍ່ຖືກຕ້ອງໂດຍເຈດຕະນາ
# (Disinformation)
# (Misinformation)
# ຂໍ້ມູນທີ່ຜິດພາດ ແມ່ນຫຍັງ?






# ມັນແຕກຕ່າງກັນ

ເຖິງແມ່ນວ່າບາງຄັ້ງ ທັງສາມອາດ
ຈະຖືກເອີ້ນວ່າ:

## ຂ່າວປອມ

# ຂ່າວປອມ Fake News
## ຂ່າວປອມ (Disinformation)

**ມັນແມ່ນຫຍັງ?**

ເນື້ອໃນທີ່ບໍ່ມີມູນຄວາມຈິງຖືກສ້າງຂຶ້ນ ໂດຍເຈດຕະນາໃຫ້ເຂົ້າໃຈຜິດ ແລະ ມີຈຸດປະສົງໃນການສ້າງຄວາມເສຍຫາຍ

**ຍ້ອນຫຍັງຄົນຈຶ່ງເຮັດແບບນີ້?**

- ເພື່ອຫາເງິນ
- ເພື່ອມີອິດທິພົນທາງການເມືອງ
- ເພື່ອສ້າງຄວາມວຸ່ນວາຍເທົ່ານັ້ນ




Image: Hartono Creative Studio from Pixabay

# ຕົວຢ່າງຂອງຂ່າວປອມ (Disinformation)

**ສຸຂະພາບຂອງ Hillary Clinton**

ໃນປີ 2016, ຜູ້ສະໝັກຊິງຕຳແໜ່ງເປັນປະທານາທິບໍດີສະຫະລັດ Hillary Clinton ໄດ້ຕົກເປັນເປົ້າໝາຍຂອງບລັອກເກີ ທີ່ເຜີຍແຜ່ຂ່າວວ່າ ນາງເປັນພະຍາດຮ້າຍທາງຮ່າງກາຍ ແລະ ທາງຈິດໃຈ. ຂ່າວປອມນີ້ໄດ້ແຜ່ຂະຫຍາຍໃນອິນເຕີເນັດ ແລະ ກະຈາຍອອກໄປທົ່ວ.



**ຍ້ອນຫຍັງຄົນຈຶ່ງເຮັດແບບນີ້?**

ເພື່ອໃຫ້ຄົນບໍ່ໄປລົງຄະແນນໃຫ້ນາງ

# ຂ່າວທີ່ຜິດພາດ (Misinformation)

**ມັນແມ່ນຫຍັງ?**

ຂໍ້ມູນທີ່ຜິດພາດເກີດຂຶ້ນຈາກຄວາມຜິດພາດທີ່ບໍ່ໄດ້ຕັ້ງໃຈ ແຕ່ບໍ່ໄດ້ຖືກສ້າງຂຶ້ນເພື່ອສ້າງຄວາມເສຍຫາຍ



Image: Creative Commons

**ຍ້ອນຫຍັງຄົນຈຶ່ງເຮັດແບບນີ້?**

- ພວກເຂົາບໍ່ໄດ້ຕັ້ງໃຈທີ່ຈະສ້າງຄວາມເສຍຫາຍ
- ຫຼາຍຄົນຕ້ອງການເປັນສ່ວນໜຶ່ງຂອງກຸ່ມທີ່ມີຄວາມຄິດເຫັນຄ້າຍຄືກັນ

# ຕົວຢ່າງຂອງຂ່າວທີ່ຜິດພາດ (Misinformation)

**ຜົນຂອງນໍ້າມັນໝາກພ້າວຕໍ່ໄວຣັສໂຄໂຣນາ ຫຼື ໂຄວິດ**

ຫຼາຍຄົນແບ່ງປັນຂໍ້ມູນຢູ່ໃນສື່ສັງຄົມອອນລາຍ ໂດຍໃນຂໍ້ມູນຂ່າວນັ້ນອ້າງວ່າ ອາຫານບາງຢ່າງສາມາດປ້ອງກັນໄວຣັສ Covid-19 ໄດ້. ບໍ່ມີຂໍ້ໃດເປັນຄວາມຈິງ. ແຕ່ເມື່ອມີຄົນແບ່ງປັນອອກໄປ ເຊິ່ງຄິດວ່າເຂົາກໍາລັງຊ່ວຍເຫຼືອຄົນອື່ນ, ແຕ່ຄວາມຈິງແລ້ວ ພວກເຂົາກາຍເປັນຄົນທີ່ເຜີຍແຜ່ຂ່າວສານຜິດພາດ. ໂດຍທີ່ພວກເຂົາບໍ່ໄດ້ມີເຈດຕະນາບໍ່ດີແຕ່ຢ່າງໃດ.




**ຍ້ອນຫຍັງຄົນຈຶ່ງເຮັດແບບນີ້?**

ຄົນເຮົາມີຄວາມຢ້ານ ແລະ ຄິດວ່າເຕິນເອງໄດ້ພົບ "ຢາປ້ອງກັນ" ແລ້ວ!.

ບາງຄົນເອີ້ນຂ່າວ ຫຼື ຂໍ້ມູນໃດໆທີ່ພວກເຂົາບໍ່ມັກ ຫຼື ບໍ່ເຫັນດີນັ້ນວ່າ

**ຂ່າວປອມ**

ນີ້ບໍ່ແມ່ນຄວາມຈິງ.

ຖ້າຂໍ້ມູນມີຫຼັກຖານ ແລະ ໄດ້ມາຈາກແຫຼ່ງທີ່ເຊື່ອຖືໄດ້,
ນັ້ນມັນບໍ່ແມ່ນ “ຂ່າວປອມ”.